ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ມອບເຄື່ອງອຸປະກອນການຮຽນ-ການສອນ ແລະ ປະເພດເຄື່ອງກິລາ




ໃນວັນທີ **15** ກໍລະກົດ **2020** ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງ ຊຽງຂວາງ (ທຫລ.ຊຂ) ໄດ້ເດີນທາງໄປມອບເຄື່ອງອຸປະກອນການຮຽນ-ການສອນ ແລະ ປະເພດເຄື່ອງກິລາ ໃຫ້ ໂຮງຮຽນປະຖົມພູວຽງ ເຂດງາມ, ເມືອງຄູນ ແຂວງຊຽງຂວາງ, ເນື່ອງໃນໂອກາດ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ **65** ປີ (20/07/1955 – 20/07/2020) ກ່າວມອບໂດຍ ທ່ານ ວິສອນ ໄຊສົງຄາມ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ແລະ ກ່າວຮັບໂດຍທ່ານ ນາງ ບົວສີ ຄໍາເພັງໄຊ ຜູ້ອໍານວຍການໂຮງຮຽນປະຖົມພູວຽງ ເຂດງາມ ເມືອງຄູນ ແຂວງຊຽງຂວາງ ລວມເປັນມູນຄ່າທັງໝົດຫຼາຍກວ່າ **3** ລ້ານກີບ.

ພ້ອມດຽວກັນນັ້ນ, ທ່ານ ນາງ ບົວສີ ຄໍາເພັງໄຊ ຜູ້ອໍານວຍການໂຮງຮຽນປະຖົມ ພູວຽງ ເຂດງາມ ໄດ້ເປັນກຽດມອບໃບກຽດຕິຄຸນ ພ້ອມທັງສະແດງຄວາມຂອບໃຈ ຕໍ່ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງຊຽງຂວາງ ທີ່ໄດ້ສະຫຼະວັດຖຸຊັບອັນມີຄ່າ, ມີຈິດໃຈຊ່ວຍເຫຼືອມອບອຸປະກອນການຮຽນ ແລະ ປະເພດເຄື່ອງກິລາ ໃນຄັ້ງນີ້.

ຫຼັງຈາກນັ້ນ, ຄູສອນປະຈຳຊັ້ນຮຽນໄດ້ນຳພາຄະນະມອບເຄື່ອງທ່ຽວຊົມອາຄານໂຮງຮຽນ ແລະ ແນະນຳຂັ້ນຕອນໃນການຈັດກິດຈະກຳການຮຽນ-ການສອນ.






✍ ຂ່າວ + ພາບ: ສຸກສະຫວັນ ພົມມະວົງ